ເອກະສານຊ້ອນ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ກະຊວງພະລັງງານ ແລະ ບໍ່ແຮ່

ລັດວິສາຫະກິດໄຟຟ້າລາວ

ເລກທີ 3578/ຟຟລ.

ນະຄອນຫຼວງວຽງຈັນ, ວັນທີ 07 SEP 2018

# ຂໍ້ກຳນົດ

## ວ່າດ້ວຍການປັບປຸງຂັ້ນຕອນການບໍລິການ ຕິດຕັ້ງໝໍ້ນັບໄຟ, ການກໍ່ສ້າງຕາຂ່າຍໄຟຟ້າ ແລະ ຕິດຕັ້ງໝໍ້ແປງໄຟຟ້າ.

- ອີງໃສ່ຄຳສັ່ງ ວ່າດ້ວຍການປັບປຸງບັນດາລະບຽບການ ແລະ ກົນໄກປະສານງານ ໃນການດຳເນີນທຸລະກິດໃນສປປ ລາວ, ສະບັບເລກທີ: 02/ນຍ, ລົງວັນທີ: 01/02/2018.
- ອີງໃສ່ຂໍ້ກຳນົດໃນການຄຸ້ມຄອງ ແລະ ນຳໃຊ້ລະບົບໄຟຟ້າ (ສະບັບປັບປຸງ 1), ເລກທີ: 0262/ຟຟລ, ລົງວັນທີ: 23/01/2017.
- ອີງໃສ່ຄູ່ມືການຕິດຕັ້ງ ໝໍ້ນັບໄຟ (ສະບັບປັບປຸງ 2), ເລກທີ: 5216/ຟຟລ, ລົງວັນທີ: 20/12/2016.

## ລັດວິສາຫະກິດໄຟຟ້າລາວ ອອກຂໍ້ກຳນົດດັ່ງນີ້:

**ມາດຕາທີ 1:** ໃຫ້ຫຼຸດຂັ້ນຕອນການບໍລິການຕິດຕັ້ງໝໍ້ນັບໄຟ, ກໍ່ສ້າງຕາຂ່າຍ 22/0.4kV ແລະ ຕິດຕັ້ງໝໍ້ແປງໄຟຟ້າ ໃນຂອບເຂດ ທົ່ວປະເທດຈາກ 6 ຂັ້ນຕອນໃຫ້ເຫຼືອ 3 ຂັ້ນຕອນ.

**ມາດຕາທີ 2:** **ກຳນົດເວລາສູງສຸດ ແຕ່ລະປະເພດບໍລິການ(ວັນລັດຖະການ).**

2.1 ໃນກໍລະນີລູກຄ້າຂໍຕິດຕັ້ງແຕ່ໝໍ້ນັບໄຟ ບໍ່ມີການກໍ່ສ້າງຕາຂ່າຍໃຊ້ເວລາ ບໍ່ເກີນ 7 ວັນ.

2.2 ໃນກໍລະນີລູກຄ້າ ຂໍຕິດຕັ້ງໝໍ້ນັບໄຟ ທີ່ມີການຕິດຕັ້ງໝໍ້ແປງ ໃຊ້ເວລາ ບໍ່ເກີນ 15 ວັນ, (ລວມທັງຜູ້ປະກອບການເປັນຜູ້ກໍ່ສ້າງ ).

2.3 ໃນກໍລະນີລູກຄ້າຂໍຕິດຕັ້ງໝໍ້ນັບໄຟ ທີ່ມີການກໍ່ສ້າງຕາຂ່າຍແຮງກາງ 22kV ລວງຍາວບໍ່ເກີນ 2km, ຕິດຕັ້ງໝໍ້ແປງ ແລະກໍ່ສ້າງຕາຂ່າຍແຮງຕໍ່າ 0.4kV ລວງຍາວ ບໍ່ເກີນ 500m ໃຊ້ເວລາ ລວມ ບໍ່ເກີນ 35 ວັນ, (ລວມທັງຜູ້ປະກອບການເປັນຜູ້ກໍ່ສ້າງ ).

**ໝາຍເຫດ:** ກໍລະນີການກໍ່ສ້າງຕາຂ່າຍມີລວງຍາວເກີນ 2km ໃຫ້ແຕ່ລະບ່ອນກ່ຽວຂ້ອງກຳນົດໄລຍະເວລາໃນການກໍ່ສ້າງຕໍ່ກິໂລແມັດຕາມເງື່ອນໄຂແຕ່ລະທ້ອງຖິ່ນຕ່າງຫາກ.

**ມາດຕາທີ 3:** **ໜ້າວຽກ ແລະ ການກຳນົດເວລາແຕ່ລະຂັ້ນຕອນ.**

ມອບໃຫ້ ຝ່າຍເຕັກນິກ, ຝ່າຍຄຸ້ມຄອງສາຍສົ່ງ ແລະ ສະຖານີ, ສາຂາແຂວງ, ສາຂາເມືອງ ອ້ອມຂ້າງຝ່າຍປະຕິບັດການ ໄຟຟ້ານະຄອນຫຼວງ ກຳນົດຂັ້ນຕອນ (Flow Chart) ແລະ ເວລາແຕ່ລະໜ້າວຽກໃນຂອບເຂດ ທີ່ລະບຸຕາມ ມາດຕາ 2 (2.1), (2.2), (2.3) ທີ່ກ່ຽວຂ້ອງກັບຝ່າຍຕົນຮັບຜິດຊອບເປັນແຕ່ລະກໍລະນີ ພ້ອມປັບປຸງແຜນວິທີປະຕິບັດຢູ່ພາຍໃນພາກສ່ວນກ່ຽວຂ້ອງຂອງຕົນໃຫ້ມີຄວາມສະດວກ, ໂປ່ງໃສ ແລະ ກວດສອບໄດ້.

ຖະໜົນມິດຕະພາບລາວ-ໄທ, ຕູ້ ປ.ນ 309, ບ້ານ ທົ່ງກາງ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ ສປປ ລາວ
ໂທ: (856-21) 316133, ແຟັກ: (856-21) 416381, ອີເມວ: edlmdo@edl.com.la, ເວັບໄຊ: www.edl.com.la

**ມາດຕາທີ 4: ຜົນສັກສິດ**

ຂໍ້ກຳນົດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ທຸກຂໍ້ກຳນົດທີ່ຂັດກັບຂໍ້ກຳນົດສະບັບນີ້ຖືກລຶບລ້າງ ແລະ ມອບໃຫ້ພາກສ່ວນທີ່ກ່ຽວຂ້ອງຈັດຕັ້ງປະຕິບັດຢ່າງເຂັ້ມງວດ ແລະ ຖອດຖອນບົດຮຽນລາຍງານຂັ້ນເທິງຮັບຊາບເປັນແຕ່ລະໄລຍະ.

ຜູ້ອຳນວຍການໃຫຍ່

ກະຊວງພະລັງງານ ແລະ ບໍ່ແຮ່
ລັດວິສາຫະກິດ
ໄຟຟ້າລາວ
EDL
ນະຄອນຫຼວງວຽງຈັນ

**ບຸນອູ້ມ ສີວັນເພັງ**
**ຜູ້ອຳນວຍການໃຫຍ່**

ບ່ອນສົ່ງ :

- ຫ້ອງການຄຸ້ມຄອງປະຕູດຽວກະຊວງແຜນການ ແລະ ການລົງທຶນ ເພື່ອຮັບຊາບ
- ຫ້ອງການກະຊວງພະລັງງານ ແລະ ບໍ່ແຮ່ ເພື່ອຮັບຊາບ
- ກົມແຜນການ ແລະ ການຮ່ວມມືກະຊວງພະລັງງານ ແລະ ບໍ່ແຮ່ ເພື່ອຮັບຊາບ
- ສາຂາອ້ອມຂ້າງຝ່າຍປະຕິບັດການເພື່ອປະຕິບັດ